**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ
ການລະບາດຂອງພະຍາດ COVID-19

ເລກທີ.1389/ສພກ.ບກ
ບໍ່ແກ້ວ, ລົງວັນທີ.4..12..2020

# ຄໍາສັ່ງ
# ຂອງຫົວໜ້າຄະນະສະເພາະກິດ
# ວ່າດ້ວຍການປິດເມືອງຕົ້ນເຜິ້ງເປັນການຊົ່ວຄາວ

**ເຖິງ:** **ບັນດາອົງການຈັດຕັ້ງພັກ-ລັດທຸກຂັ້ນ, ເຈົ້າເມືອງຕົ້ນເຜິ້ງ, ເຂດເສດຖະກິດພິເສດສາມຫຼ່ຽມຄໍາ, ນັກທຸລະກິດ-ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ ຮັບຊາບ.**

- **ອີງຕາມ** ຂໍ້ຕົກລົງ ສະບັບເລກທີ 259/ຈຂ.ບກ, ລົງວັນທີ 18 ມີນາ 2020 ວ່າການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງເຊື້ອຈຸລະໂລກສາຍພັນໃໝ່ Covid-19 ຂັ້ນແຂວງ.
- **ອີງຕາມ** ສະພາບການລະບາດ ຂອງພະຍາດໂຄວິດ-19 ຢູ່ບັນປະເທດໃກ້ຄຽງ ທີ່ຕິດຊາຍແດນກັບແຂວງບໍ່ແກ້ວ (ແຂວງຊຽງໃໝ່, ຊຽງຮາຍ ຣາຊະອານາຈັກໄທ, ແຂວງທ່າຂີ້ເຫຼັກ ສ.ມຽນມາ) ນັບມື້ເພີ່ມຂຶ້ນ.
- **ອີງຕາມ** ການຄົ້ນຄວ້າ, ປຶກສາຫາລື ແລະ ເຫັນດີເປັນເອກະພາບ ໃນກອງປະຊຸມຄະນະປະຈໍາພັກແຂວງ ຄັ້ງວັນທີ 3 ທັນວາ 2020.

ເພື່ອຮັບປະກັນໂຕຕອບໄວ ຕໍ່ການລະບາດຂອງພະຍາດໂຄວິດ-19 ທີ່ເກີດຂຶ້ນຢູ່ບັນດາປະເທດໃກ້ຄຽງ (ແຂວງຊຽງໃໝ່, ຊຽງຮາຍ ຣາຊະອານາຈັກໄທ, ແຂວງທ່າຂີ້ເຫຼັກ ສ.ມຽນມາ) ທັງຮັບປະກັນບໍ່ໃຫ້ມີການເຂົ້າ-ອອກເມືອງ ເພື່ອປ້ອງກັນການລະບາດຂອງພະຍາດໂຄວິດ-19ເຂົ້າມາແຂວງບໍ່ແກ້ວ.

## ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງເຊື້ອຈຸລະໂລກສາຍພັນໃໝ່ Covid-19 ຂັ້ນແຂວງ ອອກຄໍາສັ່ງ

1. ໃຫ້ ປິດການເຂົ້າ-ອອກ ຂອງພົນລະເມືອງຢູ່ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວເປັນການຊົ່ວຄາວ.
2. ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ສົມທົບເມືອງຕົ້ນເຜິ້ງ ຄົ້ນຄວ້າ, ແຕ່ງຕັ້ງທີມງານ ລົງປະຈໍາຈຸດກວດກາຄົນເຂົ້າ-ອອກເມືອງ ຢູ່ຈຸດບ້ານນໍ້າເກິ່ງເກົ່າ, ຈຸດບ້ານມ່ວງຄໍາ ເພື່ອກໍາສະພາບການເຄື່ອນໄຫວໄປ-ມາຂອງພົນລະເມືອງ ແລະ ກວດກາອຸ່ນທະພູມ ຕາມຄໍາສັ່ງ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.

3. ສໍາລັບບັນດາບ້ານໃນຂອບເຂດເມືອງຕົ້ນເຜີ້ງ ແມ່ນໃຫ້ຕັ້ງຈຸດກວດກາ ປິດການສັນຈອນໄປ-ມາ ຂອງປະຊາຊົນ, ຍົກເວັ້ນກໍລະນີເຈັບເປັນໄປຮັກສາສຸຂະພາບ, ສົ່ງລູກຫຼານໄປໂຮງຮຽນ, ໄປຊື້ອາຫານການກິນຢູ່ຕະຫຼາດ ແຕ່ຕ້ອງຮັບອະນຸຍາດ ຈາກການຈັດຕັ້ງຂັ້ນບ້ານທີ່ກ່ຽວຂ້ອງ.
4. ມອບໃຫ້ຂະແໜງການທີ່ກ່ຽວຂ້ອງເມືອງ ສົມທົບກັບການຈັດຕັ້ງຂັ້ນບ້ານ ເຕົ້າໂຮມເຮືອບັນທຸກສິນຄ້າ, ເຮືອໄວຢູ່ເປັນຈຸດ ໂດຍແຕ່ງຕັ້ງເຈົ້າໜ້າທີ່ ກອງຫຼອນ-ປກສ ບ້ານ ຍາມຮັກສາຄວາມສະຫງົບ. ສ່ວນເຮືອກາບທົ່ວໄປແມ່ນໃຫ້ເອົາຂຶ້ນຝັ່ງທຸກລໍາ.
5. ມອບໃຫ້ອົງການປົກຄອງເມືອງຕົ້ນເຜີ້ງປຸກລະດົມບັນດາບ້ານ ຕະຫຼອດຮອດນັກທຸລະກິດ, ຜູ້ປະກອບການ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດພາລະກິດຂອງເຈົ້າໜ້າທີ່ໃນຄັ້ງນີ້ ຕາມຄວາມເໝາະສົມ.

**ຮອງເຈົ້າແຂວງແຂວງບໍ່ແກ້ວ**

(ຫົວໜ້າຄະນະສະເພາະກິດ COVID-19 ຂັ້ນແຂວງ)

**ຈອນສີ ລັດຕະນະປັນ**